ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະຂົນສົ່ງ

ກົມຂົນສົ່ງ ເລກທີ: /ກຂສ

ນະຄອນຫຼວງວຽງຈັນ, ວັນທີ:

# ບົດສະເໜີ

# ວຽກງານການຄຸ້ມຄອງການຂົນສົ່ງໂດຍສານ ແລະ ສະຖານີລົດຂົນສົ່ງ

## 1. ສະພາບລວມ

ການຂົນສົ່ງໂດຍສານ ແມ່ນຂະແໜງການນຶ່ງ ທີ່ມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງຕໍ່ເນື່ອງແລະກະໂດດຂັ້ນ ເນື່ອງມາຈາກພື້ນຖານໂຄງລ່າງເສັ້ນທາງ ໄດ້ຮັບການປັບປຸງ ແຕ່ເໜືອຕະຫລອດໃຕ້ ມີເສັ້ນທາງປູຢາງ ແຕສູນກາງຫາແຂວງ, ຫາເມືອງໃນທົ່ວປະເທດໄດ້ສຳເລັດກວ່າ 90 ເປີເຊັນ. ປະເທດມີສະເຖຍລະພາບທາງດ້ານການເມືອງ ແລະ ຄວາມສະຫງົບສຸກ, ຊີວິດການເປັນຢູ່ ຂອງປະຊາຊົນ ດີຂຶ້ນເປັນລຳດັບ, ການໄປມາຫາສູ່ ແລະ ການເດີນທາງເພື່ອປະກອບອາຊີບ ແລະ ການທຸລະກິດ,ການເຊື່ອມໂຍງກັບປະເທດຕ່າງໆ ທາງດ້ານການຄ້າ ແລະ ການລົງທືນເພີ້ມຂື້ນ, ຊຶ່ງມາຮອດປະຈຸບັນ ທຸກແຂວງ ແລະ ທຸກເມືອງໃນທົ່ວປະເທດໄດ້ມີລົດໂດຍສານໄປຮອດໄປເຖິງ ອັນໄດ້ສ້າງຄວາມສະດວກສະບາຍ ໃຫ້ແກ່ປະຊາຊົນບັນດາເຜົ່າໃນການໄປມາຫາສູ່, ເຄື່ອນໄຫວທຸລະກິດມີຄວາມສະດວກ ນອກນັ້ນຍັງໄດ້ອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ແລະ ຊາວຕ່າງປະເທດທີ່ເຂົ້າມາທ່ອງທ່ຽວ ແລະ ປະຕິບັດວຽກງານຢູ່ ສປປ ລາວ ຂອງພວກເຮົາ. ໃນໄລຍະຜ່ານມາພວກເຮົາຍັງໄດ້ປັບປຸງຍົກລະດັບມາດຕາຖານພາຫະນະຂົນສົ່ງໄດ້ຈຳນວນໜຶ່ງ ແລະ ຄຸນນະພາບການບໍລິການຜູ້ໂດຍສານ ເພື່ອໃຫ້ຜູ້ໂດຍສານມີທາງເລືອກໃຊ້ບໍລິການຕາມຄວາມຕ້ອງການ, ຊຶ່ງພວກເຮົາໄດ້ບໍລິການລົດໂດຍສານເປັນ 3 ປະເພດ:ລົດດ່ວນພິເສດ (VIP1) ,ລົດດ່ວນ (VIP2) ແລະລົດໂດຍສານທຳມະດາ.

ປັດຈຸບັນທົ່ວປະເທດພວກເຮົາມີສາຍທາງຂົນສົ່ງໂດຍສານປະຈຳທາງລະຫວ່າງແຂວງ ທັງຫມົດ: 71 ສາຍທາງ, ສາຍທາງຈາກເມືອງບັນດາແຂວງ ຫາສູນກາງ ມີ 15 ສາຍທາງ, ສາຍທາງພາຍໃນແຂວງ ຂອງບັນດາແຂວງມີ 119 ສາຍທາງ. ມີບໍລິສັດຂົນສົ່ງໂດຍສານປະຈຳທາງທັງໝົດ 35 ບໍລິສັດ, ມີສະມາຄົມ ລົດຂົນສົ່ງໂດຍສານ 74 ສະມາຄົມ, ມີພາຫະນະຂົນສົ່ງທັງຫມົດ 7250 ຄັນ,

- ສຳລັບສາຍທາງຂົນສົ່ງໂດຍສານລະຫວ່າງປະເທດລວມມີ 63 ສາຍທາງ, ມີບໍລິສັດຂົນສົ່ງໂດຍສານຂອງລາວເຂົ້າຮ່ວມ 27 ຫົວໜ່ວຍ ມີພາຫະນະຂົນສົ່ງໂດຍສານ 186 ຄັນ ລາຍລະອຽດ ດັ່ງນີ້:

1. ລາວ-ຫວຽດນາມ ມີທັງ 37 ສາຍທາງ, ມີ 14 ຫົວໜ່ວຍທຸລະກິດຂົນສົ່ງໂດຍສານຂອງລາວເຂົ້າຮ່ວມ, ມີລົດໂດຍສານ 137 ຄັນ.
2. ລາວ-ຈີນ ມີທັງໝົດ 15 ສາຍທາງ, ມີ 7 ຫົວໜ່ວຍທຸລະກິດຂົນສົ່ງໂດຍສານຂອງລາວເຂົ້າຮ່ວມ , ມີລົດໂດຍສານ 25 ຄັນ.
3. ລາວ-ໄທ ມີ 12 ສາຍທາງ, ມີ 7 ຫົວໜ່ວຍທຸລະກິດຂົນສົ່ງໂດຍສານຂອງລາວເຂົ້າຮ່ວມ, ມີລົດໂດຍສານ 20 ຄັນ.
4. ລາວ-ກຳປູເຈັຍ ມີ 2 ສາຍທາງ, ມີ 1 ຫົວໜ່ວຍທຸລະກິດຂົນສົ່ງໂດຍສານຂອງລາວເຂົ້າຮ່ວມ , ມີລົດໂດຍສານ 4 ຄັນ.

## 2. ບັນຫາ ແລະ ຂໍ້ຄົງຄ້າງ.

2.1. ການຄຸ້ມຄອງລັດ ດ້ວຍລະບຽບກົດໝາຍ ເຂົ້າໃນວຽກງານຄຸ້ມຄອງ ການຂົນສົ່ງໂດຍສານ ພວກເຮົາຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ, ຍັງບໍ່ທັນມີລະບົບຄຸ້ມຄອງທີ່ທັນສະໄໝ ທີ່ສາມາດກວດສອບໄດ້ ເປັນຕົ້ນການຄຸ້ມຄອງສາຍທາງ, ຄຸ້ມຄອງສະຖານີ ແລະ ການຄຸ້ມຄອງນຳໃຊ້ລົດໂດຍສານປະຈຳທາງ.

2.2. ມີປະກົດການຂັດແຍ່ງພາຍໃນພາກທຸລະກິດດ້ວຍກັນໃນການເຄື່ອນໄຫວດຳເນີນທຸລະກິດສູງ, ແຂ່ງຂັນກັນສ້າງສະຖານີ, ມີການຍາດແຍ່ງເປີດສາຍທາງແລ່ນລົດ ເພື່ອຂາຍສິດນຳໃຊ້ ແລະ ມີການເປີດສາຍທາງທັບຊ້ອນສາຍທາງກັນ, ຕົ້ນທາງປາຍທາງຕ່າງກັນ ແຕ່ເປັນສາຍທາງດຽວ, ກຳນົດຖ້ຽວແລ່ນລົດບໍ່ສົມດູນກັບບໍລິມາດຜູ້ໃຊ້ບໍລິການ, ເກີດມີການຍາດສ່ວນແບ່ງເວລາປ່ອຍລົດອອກສະຖານີ, ມີການຕໍ່ເຕີມລົດ, ມີການຫຼອກລວງລູກຄ້າກ່ຽວກັບຄຸນນະພາບການບໍລິການ ແລະ ມີການຊົດເຊີຍຄ່າປະກັນໄພເມື່ອລົດເກີດອຸປະຕິ ເຫດຊັກຊ້າ ແລະ ບັນຫາອື່ນໆ.

2.3. ການຄຸ້ມຄອງລົດຕູ້ຂົນສົ່ງໂດຍສານປະຈຳທາງພວກເຮົາຍັງເຮັດບໍ່ທັນໄດ້ດີ ຍັງມີການປົນເປລະຫວ່າງລົດໂດຍສານປະຈຳທາງ ກັບລົດຕູ້ບໍລິການໃຫ້ເຊົ່າ, ເຮັດໃຫ້ຜູ້ປະກອບການຊວຍໂອກາດ ແລ່ນຊະຊາຍບໍ່ໄປຕາມເສັ້ນ ທາງອະນຸມັດ, ບໍ່ເຂົ້າສະຖານີທີ່ລັດກຳນົດ.

2.4. ການຄຸ້ມຄອງການຂາຍປີ້ລົດໂດຍສານປະຈຳທາງ ຍັງຄຸ້ມຄອງບໍ່ທັນໄດ້ດີ ໂດຍສະເພາະການຂາຍຕາມໂຮງແຮມ,ເຮືອນພັກ,ຮ້ານອາຫານ ແລະ ສະຖານທີ່ອື່ນໆແບບຊະຊາຍ, ບໍ່ຜ່ານການຄຸ້ມຄອງ ແລະ ການກຳນົດຂອງອົງການລັດທີ່ກ່ຽວຂ້ອງ, ບໍ່ມີລະບົບການເຊື່ອມໂຍງກັບສະຖານີ, ເຮັດໃຫ້ການໃຊ້ບໍລິການຂອງຜູ້ ໂດຍສານບໍ່ໄດ້ຮັບຄວາມສະດວກ. ລົດຂົນສົ່ງທ່ອງທ່ຽວມີການບໍລິການຂາຍປີ້ແບບລົດໂດຍສານປະຈຳທາງໃຫ້ນັກທ່ອງທ່ຽວ,ຊຶ່ງສ້າງຄວາມສັບສົນໃຫ້ແກ່ການຄຸ້ມຄອງ ແລະ ເກີດຂໍ້ຂັດແຍ່ງກັບພາກສ່ວນທີ່ເຮັດການຂົນສົ່ງໂດຍສານປະຈຳທາງ.

2.5. ການອະນຸຍາດສ້າງສະຖານີລົດໂດຍສານ ຜ່ານມາເຫັນວ່າບໍ່ສອດຄ່ອງກັບລະບຽບການແລະກົດໝາຍຂອງ ຂະແໜງ ຍທຂ ວາງອອກ ເປັນຕົ້ນ (ກົດໝາຍຂົນສົ່ງທາງບົກ, ຂໍ້ກຳນົດ 4088 ແລະ

ແຈ້ງການ 3049) ແລະ ການປຸກສ້າງສະຖານີກໍ່ບໍ່ໄປຕາມທິດຈັດສັນຂອງຝັງເມືອງ, ແຂວງທີ່ຍັງບໍ່ທັນຈຳເປັນມີປະລິມານຖ້ຽວລົດໂດຍສານເຂົ້າ-ອອກໜ້ອຍ ພັດມີການສ້າງຫຼາຍສະຖານີ ແລະ ອີກຢ່າງໜຶ່ງຜູ້ລົງທຶນສ້າງສະຖານີ ແລະ ຜູ້ເຮັດການຂົນສົ່ງກໍ່ແມ່ນຜູ້ດຽວກັນ ຊຶ່ງເປັນສາຍເຫດພາໃຫ້ເກີດມີຂໍ້ຂັດແຍ່ງ.

2.6. ການຄຸ້ມຄອງຜູ້ຂັບລົດໂດຍສານປະຈຳທາງ ລະຫວ່າງແຂວງ, ລະຫວ່າງປະເທດ ຜ່ານມາຍັງພວກເຮົາຍັງບໍ່ມີການຄຸ້ມຄອງຕາມລະບຽບກົດໝາຍ, ມີແຕ່ພາກທຸລະກິດເປັນຊອກຫາແລະນຳໃຊ້ເອງ, ບໍ່ໄດ້ຜ່ານການອົບຮົມລະບຽບການຂົນສົ່ງໂດຍສານປະຈຳທາງ ຊຶ່ງເປັນສາຍເຫດໜຶ່ງທີ່ເຮັດໃຫ້ຜູ້ຂັບລົດ ລະເມີດລະບຽບການຂົນສົ່ງ ແລະ ຫຼອກລວງລູກຄ້າ.

3. **ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:**

3.1. ຍ້ອນບໍ່ທັນມີແຜນຍຸດທະສາດການພັດທະນາຂະແໜງການຂົນສົ່ງຢ່າງເປັນລະບົບ ແລະ ແຜນຍຸດທະສາດທີ່ກົມຂົນສົ່ງຮ່າງຂຶ້ນມານັ້ນຍັງບໍ່ໄດ້ຖືກຮັບຮອງ.

3.2. ການປັບປຸງຂໍ້ກຳນົດ, ກົດລະບຽບຄຸ້ມຄອງຍັງປັບປຸງບໍ່ທັນກັບສະພາບການຂະຫຍາຍຕົວຂອງຂະແໜງການ ຂົນສົ່ງໃນໄລຍະໃໝ່, ສິ່ງທີ່ມີໃນປັດຈຸບັນຍັງບໍ່ທັນຊັດເຈນ ແລະ ບໍ່ສອດຄ່ອງກັບເນື້ອໃນກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງໃໝ່.

3.3. ການບັງຄັບໃຊ້ລະບຽບ, ກົດໝາຍກ່ຽວຂ້ອງ ເຂົ້າໃນການຄຸ້ມຄອງການຂົນສົ່ງຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນເນື່ອງຈາກມີການພົວພັນກັບຫຼາຍພາກສ່ວນ,

3.4. ບໍ່ມີການກວດກາເພື່ອບັງຄັບການປະຕິບັດລະບຽບການ ແລະ ກົດໝາຍ, ເຮັດໃຫ້ພາກທຸລະກິດມີການລະ ເມີດລະບຽບການຂົນສົ່ງໄດ້ງ່າຍຂຶ້ນເຊັ່ນ: ການບັນທຸກສິນຄ້າໃນລົດ, ການບັນທຸກຜູ້ໂດຍສານເກີນ, ການເສີບຕັ່ງນັ່ງໃນເວລາແລ່ນລົດ, ແລ່ນລົດໄວເກີນກຳນົດ, ເຮັດໃຫ້ຜູ້ໂດຍສານບໍ່ໄດ້ຮັບຄວາມສະດວກ ແລະ ມີຄວາມສ່ຽງໃນການຂົນສົ່ງ.

3.5. ບຸກຄະລະກອນ ທີ່ມີຄວາມຮູ້, ຄວາມສາມາດດ້ານການຄຸ້ມຄອງ, ການບໍລິຫານທຸລະກິດການຂົນສົ່ງຍັງຈຳກັດຢູ່, ໂດຍສະເພາະຂັ້ນຈຸລະພາກ ຫົວໜ່ວຍທຸລະກິດ, ຈັນຍາບັນ ໃນການດຳເນີນທຸລະກິດ ຂອງ ຜູ້ປະ ກອບການບໍ່ສູງ.

4. **ທິດທາງແກ້ໄຂໃນຕໍ່ໜ້າ.**

4.1. ສືບຕໍ່ສ້າງແຜນຍຸດທະສາດການຂົນສົ່ງໃຫ້ໄດ້ຖືກຮັບຮອງຈາກລັດຖະບານ.

4.2. ປັບປຸງຂໍ້ກຳນົດ, ລະບຽບການ, ແຈ້ງການ ກ່ຽວກັບການຄຸ້ມຄອງການຂົນສົ່ງ ໃຫ້ສອດຄ່ອງກັບເນື້ອໃນຂອງ ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງ, ສອດຄ່ອງກັບສະພາບການແຕ່ລະໄລຍະ.

4.3. ເພີ່ມທະວີການຄຸ້ມຄອງມະຫາພາກ ດ້ວຍລະບຽບ, ກົດໝາຍ ເຂົ້າໃນການຄຸ້ມຄອງການຂົນສົ່ງໂດຍສານ,ສິນຄ້າ ແລະ ສະຖານີລົດຂົນສົ່ງ.

4.4. ປີ 2015 ເປັນຕົ້ນໄປຈະຂຶ້ນທະບຽນຫົວໜ່ວຍວິສາຫະກິດການຂົນສົ່ງ ຕາມພາລະບົດບາດທີ່ກຳນົດໃນກົດໝາຍ ວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງດັ່ງນີ້:

- ກົມຂົນສົ່ງ ຈະຄຸ້ມຄອງການອອກອະນຸຍາດດຳເນີນການຂົນສົ່ງໂດຍສານ, ສິນຄ້າ ແລ ສະຖານີລົດຂົນສົ່ງໂດຍສານ ລະຫວ່າງແຂວງ, ລະຫວ່າງປະເທດ ປະຈຳປີ, ສົມທົບພະແນກ ຍທຂ ແຂວງ, ນະຄອນຫຼວງ ລົງຕິດຕາມກວດກາການເຄື່ອນໄຫວຂອງຫົວໜ່ວຍວິສາຫະກິດ.
- ສຳລັບ ແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງແລະອອກອະນຸຍາດດຳເນີນທຸລະກິດຂົນສົ່ງໂດຍສານ, ສິນຄ້າ ແລະ ສະຖານີລົດຂົນສົ່ງໂດຍສານພາຍໃນແຂວງ, ຕິດຕາມຄຸ້ມຄອງການເຄື່ອນໄຫວຂອງວິສາຫະກິດທີ່ດຳເນີນທຸລະກິດຂົນສົ່ງ ລະຫວ່າງແຂວງ, ລະຫວ່າງປະເທດ.

4.5. ສ້າງຕັ້ງ ຄະນະກຳມະການຄຸ້ມຄອງສາຍທາງຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງເພື່ອຕິດ ຕາມ,ກວດກາ, ຈັດສັນຄືນໃໝ່ຈຳນວນຖ້ຽວແລ່ນລົດ ຂອງແຕ່ລະສາຍທາງ ແລະ ເວລາປ່ອຍລົດຢູ່ສະຖານີຕົ້ນທາງ-ປາຍທາງ, ໂດຍໃຫ້ພະແນກ ຍທຂ ແຂວງ, ນະຄອນຫຼວງເປັນເຈົ້າການ.

4.6. ເພີ່ມທະວີການກວດກາການຂົນສົ່ງ ດ້ວຍການສ້າງຕັ້ງກອງກວດກາການຂົນສົ່ງເປັນປະຈຳ ຕາມສາຍທາງ ແລະ ສືບຕໍ່ຈັດຕັ້ງກວດກາລົດກ່ອນປ່ອຍອອກຈາກສະຖານີຢ່າງເຂັ້ມງວດ ດ້ວຍການເຂົ້າຮ່ວມ ຂອງ ທຸກພາກສ່ວນກ່ຽວຂ້ອງ. ເພື່ອເປັນບ່ອນອີງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງຂອງພະແນກ ຍທຂ ແຂວງ, ນະຄອນຫຼວງ.

4.7. ອອກລະບຽບຄຸ້ມຄອງ ການນຳໃຊ້ລົດຕູ້ໂດຍສານສະເພາະ ແລະ ການຄຸ້ມຄອງການຂາຍປີ້ໂດຍສານໃຫ້ເປັນເອກະພາບທົ່ວປະເທດ ໂດຍນຳໃຊ້ລະບົບ IT ເຂົ້າຊ່ວຍໃນການຄຸ້ມຄອງການຂາຍປີ້ໃຫ້ມີການເຊື່ອມຍົງ ລະຫວ່າງຜູ້ຂາຍ ກັບ ສະຖານີ ເພື່ອຮັບປະກັນຄວາມສະດວກ, ວ່ອງໄວໃຫ້ຜູ້ໃຊ້ບໍລິການ.

4.8. ອອກດຳລັດນາຍົກ ກ່ຽວກັບການສ້າງຕັ້ງສະຖານີລົດໂດຍສານ ບົນພື້ນຖານ ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງ, ການຄົ້ນຄວ້າສ້າງຕັ້ງ ສະຖານີລົດຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງ, ລະຫວ່າງປະເທດ, ຕ້ອງໄດ້ຜ່ານການເຫັນດີຈາກ ກະຊວງ ຍທຂ.

4.9. ປະສານສົມທົບກະຊວງວັດທະນະທຳ ເພື່ອກຳນົດຄວາມຮັບຜິດຊອບ ລະຫວ່າງຂະແໜງ ຍທຂ ກັບຂະແໜງທ່ອງທ່ຽວ ໃນການຄຸ້ມຄອງລົດຂົນສົ່ງທ່ອງທ່ຽວ ໃຫ້ເປັນເອກະພາບນຳກັນ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດຕົວຈິງ.

4.10. ຍົກລະດັບບຸກຄະລະກອນຄຸ້ມຄອງການຂົນສົ່ງ ທັງພາກລັດ ແລະ ພາກທຸລະກິດໃຫ້ມີຄວາມພ້ອມໃນການຄຸ້ມຄອງ ແລະ ການດຳເນີນການຂົນສົ່ງ, ຄຸ້ມຄອງ ແລະ ຍົກລະດັບນັກຂັບຂີ່ໃຫ້ມີຄຸນນະພາບ, ມີຄວາມສາມາດເພື່ອເຮັດການຂົນສົ່ງເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

5. **ມາດຕາການຈັດຕັ້ງປະຕິບັດ.**

5.1. ກົມຂົນສົ່ງ:

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ,ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງໃຫ້ພະແນກ ຍທຂ ແລະ ອົງການລັດທີ່ກ່ຽວຂ້ອງໃນຂອບເຂດທົ່ວປະເທດ.
- ຄົ້ນຄວ້າ ແລະ ປັບປຸງນິຕິກໍາຕ່າງໆເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂດຍໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ, ປະສານກັບທຸກພາກສ່ວນ ເພື່ອແກ້ໄຂບັນຫາເກີດຂື້ນໃຫ້ທັນການ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດແຜນການໃຫ້ໄດ້ຮັບຜົນດີ.
- ຂຶ້ນບັນຊີອອກອະນຸຍາດດຳເນີນການຂົນສົ່ງໃຫ້ຫົວໜ່ວຍວິສາຫະກິດ, ສະຖານີລົດຂົນສົ່ງໂດຍສານປະຈໍາລະຫວ່າງແຂວງ, ລະຫວ່າງປະເທດ ປະຈໍາປີ.
- ຂຶ້ນບັນຊີ, ອອກບັດຜູ້ຂັບລົດ, ພະນັກງານປະຈໍາລົດຂົນສົ່ງສິນຄ້າ,ໂດຍສານປະຈໍາທາງ ລະຫວ່າງແຂວງ, ລະຫວ່າງປະເທດ.
- ອອກເອກະສານຄຸ້ມຄອງ ຕິດຕາມລົດຂົນສົ່ງ ທີ່ເຄື່ອນໄຫວດຳເນີນການຂົນສົ່ງ ລະຫວ່າງ ແຂວງ, ລະຫວ່າງປະເທດ.

5.2. **ພະແນກ ຍທຂ ແຂວງ,ນະຄອນຫລວງ**

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ, ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງ ໃຫ້ຫ້ອງການ ຍທຂ ເມືອງ ແລະ ຫົວໜ່ວຍທຸລະກິດທີ່ຕົນຮັບຜິດຊອບຄຸ້ມຄອງ.
- ຜັນຂະຫຍາຍທິດທາງແກ້ໄຂອັນລວມ ມາເປັນແຜນການຂອງຕົນເພື່ອຈັດຕັ້ງປະຕິບັດ ການຄຸ້ມຄອງລັດ ແລະ ວຽກງານຂົນສົ່ງ ຕາມລະບຽບກົດໝາຍໃຫ້ໄດ້ຮັບຜົນ.
- ປະສານສົມທົບອົງການທີ່ກ່ຽວຂ້ອງອື່ນໃນການຈັດຕັ້ງຄຸ້ມຄອງ ແລະ ກວດກາຫົວໜ່ວຍທຸລະກິດຂົນສົ່ງ ແລະ ສະຖານີຂົນສົ່ງ ຕາມພາລະບົດບາດ ແລະ ສິດໜ້າທີ່ຂອງຕົນ.

5.3. **ຫ້ອງການ ຍທຂ ເມືອງ**

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ, ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
- ປະຕິບັດສິດໜ້າທີ່ການຄຸ້ມຄອງການຂົນສົ່ງຕາມ ພາລະບົດບາດໃນຂອບເຂດຄວາມຮັບຜິດຊອບ ແລະຕາມການມອບໝາຍກຂອງພະແນກ ຍທຂ ແຂວງນະຄອນຫລວງ.

**ຫົວໜ້າກົມ**

# ບົດສະເໜີ

## ວຽກງານການຄຸ້ມຄອງການຂົນສົ່ງໂດຍສານ

## ແລະ ສະຖານີລົດຂົນສົ່ງໂດຍສານ

- **ສະພາບລວມ**

- ການຂົນສົ່ງໂດຍສານ ແມ່ນຂະແໜງການນຶ່ງ ທີ່ມີການເຕີບໃຫຍ່ຂະຫຍາຍຕົວ ຢ່າງຕໍ່ເນື່ອງ ແລະ ກະໂດດຂັ້ນ ເນື່ອງຈາກພວກເຮົາມີການພັດທະນາພື້ນຖານໂຄງລ່າງ ເສັ້ນທາງໄດ້ຮັບການປັບປຸງເສັ້ນທາງປູຢາງ ແຕ່ເໜືອຕະຫລອດໃຕ້, ແຕ່ສູນກາງຫາທ້ອງຖິ່ນໃນທົ່ວປະເທດ. ຊຶ່ງມາຮອດປະຈຸບັນ ທຸກແຂວງ ແລະ ທຸກເມືອງໃນທົ່ວປະເທດໄດ້ມີລົດໂດຍສານໄປຮອດໄປເຖິງ ອັນໄດ້ສ້າງຄວາມສະດວກສະບາຍ.

- ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ ແລະ ຄວາມສະຫງົບສຸກ, ຊີວິດການເປັນຢູ່ຂອງປະຊາຊົນ ດີຂຶ້ນເປັນລຳດັບ, ການໄປມາຫາສູ່ ແລະ ການເດີນທາງເພື່ອປະກອບອາຊີບ ແລະ ການຄ້າຂາຍຂອງປະຊາຊົນບັນດາເຜົ່າເພີ່ມຂຶ້ນ,

- ປະເທດຊາດມີການເຊື່ອມໂຍງ ກັບປະເທດຕ່າງໆ ທາງດ້ານການຄ້າ ແລະ ການລົງທຶນເພີ້ມຂື້ນ, ນັກທ່ອງທ່ຽວ ແລະ ຊາວຕ່າງປະເທດເຂົ້າມາທ່ອງທ່ຽວ ແລະ ປະຕິບັດວຽກງານຢູ່ ສປປ ລາວ ຂອງພວກເຮົາເພີ່ມຂື້ນ.

- ການບໍລິການຂົນສົ່ງໂດຍສານ, ມີລົດບໍລິການເປັນ 3 ປະເພດ: ລົດດ່ວນພິເສດ (VIP1), ລົດດ່ວນ(VIP2) ແລະ ລົດໂດຍສານທຳມະດາ, ເພື່ອໃຫ້ຜູ້ໂດຍສານມີທາງເລືອກໃຊ້ບໍລິການຕາມຄວາມຕ້ອງການ,

- **<u>ສະພາບລວມດັ່ງ</u>**

  - ມີສາຍທາງຂົນສົ່ງ ລະຫວ່າງແຂວງ ທັງຫມົດ 71 ສາຍທາງ,
  - ຈາກເມືອງບັນດາແຂວງ ເຂົ້າຫານະຄອນຫຼວງມີ 15 ສາຍທາງ,
  - ສາຍທາງພາຍໃນແຂວງ ຂອງບັນດາແຂວງມີ 119 ສາຍທາງ.
  - ມີບໍລິສັດຂົນສົ່ງໂດຍ ສານປະຈໍາທາງ 35 ບໍລິສັດ, ມີສະມາຄົມລົດຂົນສົ່ງໂດຍສານ 74 ສະມາຄົມ, ມີພາຫະນະຂົນສົ່ງທັງຫມົດ 7,250 ຄັນ.
  - ສາຍທາງຂົນສົ່ງໂດຍສານ ລະຫວ່າງປະເທດ ລວມມີ 63 ສາຍທາງ, ມີບໍລິສັດຂົນສົ່ງເຂົ້າຮ່ວມ 27 ບໍລິສັດ, ມີພາຫະນະຂົນສົ່ງ 186 ຄັນ, ລາຍລະອຽດດັ່ງນີ້:
    1. ລາວ-ຫວຽດນາມມີ 37 ສາຍທາງ, ມີ 14 ບໍລິສັດ, ມີລົດ137 ຄັນ.
    2. ລາວ-ຈີນ ມີ 15 ສາຍທາງ, ມີ 7 ບໍລິສັດ, ມີລົດ 25 ຄັນ.
    3. ລາວ-ໄທ ມີ 12 ສາຍທາງ, ມີ 7 ບໍລິສັດ, ມີລົດ 20 ຄັນ.
    4. ລາວ-ກໍາປູເຈັຍ ມີ 2 ສາຍທາງ, ມີ 1 ບໍລິສັດ, ມີລົດ 4 ຄັນ.

2. <u>ບັນຫາ ແລະ ຂໍ້ຄົງຄ້າງ</u>.

2.1 ການຄຸ້ມຄອງລັດ ດ້ວຍລະບຽບກົດໝາຍເຂົ້າໃນວຽກງານຄຸ້ມຄອງການຂົນສົ່ງໂດຍສານ, ຄຸ້ມຄອງສະຖານີ ພວກເຮົາຍັງເຮັດບໍ່ໄດ້ດີ ແລະ ເຂັ້ມງວດເທົ່າທີ່ຄວນ, ຍັງບໍ່ທັນມີ ລະບົບການຄຸ້ມຄອງທີ່ທັນສະໄໝ ທີ່ສາມາດກວດຊອບໄດ້ ເປັນຕົ້ນການຄຸ້ມຄອງສາຍທາງ ແລະ ການຄຸ້ມຄອງການນໍາໃຊ້ລົດໂດຍສານປະຈໍາທາງ,

2.2 ມີປະກົດການ ຂັດແຍ່ງພາຍໃນພາກທຸລະກິດດ້ວຍກັນສູງ, ແຂ່ງຂັນກັນສ້າງສະຖານີ, ມີການຍາດແຍ່ງກັນເປີດສາຍທາງແລ່ນລົດ ເພື່ອຂາຍສິດນໍາໃຊ້ ແລະ ມີການເປີດສາຍທາງທັບຊ້ອນສາຍທາງກັນ, ກໍານົດຈໍານວນຖ້ຽວ ໃນສາຍທາງບໍ່ສົມດູນ ກັບ ບໍລິມາດຜູ້ໃຊ້ບໍລິການ, ມີການຍາດສ່ວນແບ່ງເວລາປ່ອຍລົດອອກສະຖານີ ແລະ ມີການຫຼອກລວງລູກຄ້າ ກ່ຽວກັບຄຸນນະພາບການບໍລິການ.

2.3 ການຄຸ້ມຄອງລົດຕູ້ຂົນສົ່ງໂດຍສານ ປະຈໍາທາງ ຍັງປິ່ນເປ ກັບ ລົດຕູ້ບໍລິການໃຫ້ເຊົ່າ ເຮັດໃຫ້ຜູ້ປະກອບການຊວຍໂອກາດແລ່ນຊະຊາຍ ບໍ່ໄປຕາມເສັ້ນທາງອະນຸມັດ, ບໍ່ເຂົ້າສະຖານີທີ່ລັດກໍານົດ.

<u>ບັນຫາ ແລະ ຂໍ້ຄົງຄ້າງ ຕໍ່</u>

2.4 ການຄຸ້ມຄອງການຂາຍປີ້ລົດໂດຍສານປະຈຳທາງລະຫວ່າງແຂວງ, ລະຫວ່າງ ປະເທດ ຍັງບໍ່ທັນໄດ້ດີ, ໂດຍສະເພາະການຂາຍຕາມໂຮງແຮມ, ເຮືອນພັກ, ຮ້ານອາຫານ ແລະ ສະຖານທີ່ອື່ນໆ ແບບຊະຊາຍ , ບໍ່ຜ່ານການຄຸ້ມຄອງ ແລະ ການກຳນົດຂອງອົງການລັດທີ່ກ່ຽວຂ້ອງ, ບໍ່ມີລະບົບການເຊື່ອມໂຍງກັບສະຖານີ ເຮັດໃຫ້ການໃຊ້ບໍລິການຂອງຜູ້ໂດຍສານບໍ່ໄດ້ຮັບຄວາມສະດວກ. ລົດຂົນສົ່ງທ່ອງທ່ຽວມີການບໍລິການຂາຍປີ້ທ່ອແບບລົດໂດຍສານປະຈຳທາງ ໃຫ້ນັກທ່ອງທ່ຽວ, ສ້າງຄວາມສັບສົນໃຫ້ແກ່ການຄຸ້ມຄອງແລະ ເກີດຂໍ້ຂັດແຍ່ງ ກັບ ບໍລິສັດຂົນສົ່ງໂດຍສານປະຈຳທາງ.

2.5 ການອະນຸຍາດສ້າງສະຖານີລົດໂດຍສານ ຜ່ານມາເຫັນວ່າບໍ່ສອດຄ່ອງກັບລະບຽບການ ແລະ ກົດໝາຍຂອງຂະແໜງ ຍທຂ ເປັນຕົ້ນ( ກົດໝາຍຂົນສົ່ງທາງບົກ ສະບັບປັບປຸງ, ຂໍ້ກຳນົດ 4088 ແລະ ແຈ້ງການ3049) ແຂວງທີ່ຍັງບໍ່ທັນຈຳເປັນ ມີປະລິມານຖ້ຽວລົດໂດຍສານເດີນທາງມີ ໜ້ອຍ ພັດມີການສ້າງຫຼາຍສະຖານີ ແລະ ອີກຢ່າງໜຶ່ງຜູ້ ລົງທຶນສ້າງສະຖານີ ແລະ ຜູ້ເຮັດການຂົນສົ່ງກໍ່ແມ່ນຜູ້ດຽວກັນ ຊຶ່ງເປັນສາຍເຫດພາໃຫ້ເກີດມີຂໍ້ຂັດແຍ່ງ.

2.6 ການຄຸ້ມຄອງຜູ້ຂັບລົດໂດຍສານປະຈຳທາງລະຫວ່າງແຂວງ,ລະຫວ່າງປະເທດ ຜ່ານມາ ພວກເຮົາຍັງບໍ່ມີການຄຸ້ມຄອງຕາມລະບຽບກົດໝາຍ, ມີແຕ່ພາກທຸລະກິດ ເປັນຊອກຫາ ແລະ ນຳໃຊ້ເອງ, ບໍ່ໄດ້ຜ່ານການອົບຮົມ ລະບຽບການຂົນສົ່ງໂດຍສານປະຈຳທາງ ຊຶ່ງເປັນສາຍເຫດໜຶ່ງ ທີ່ເຮັດໃຫ້ຜູ້ຂັບລົດລະເມີດລະບຽບການຂົນສົ່ງ.

3. ສາຍເຫດທີ່ພາໃຫ້ມີຂໍ້ຄົງຄ້າງ:

3.1 ຍ້ອນບໍ່ທັນມີແຜນຍຸດທະສາດ ການພັດທະນາ ຂະແໜງການຂົນສົ່ງຢ່າງເປັນລະບົບ ແລະ ແຜນຍຸດທະສາດ ທີ່ກົມຂົນສົ່ງຮ່າງຂຶ້ນມານັ້ນ ຍັງບໍ່ໄດ້ຖືກຮັບຮອງ.

3.2 ການປັບປຸງຂໍ້ກຳນົດ, ກົດລະບຽບຄຸ້ມຄອງ ເຮັດບໍ່ທັນກັບສະພາບການຂະຫຍາຍຕົວຂອງຂະແໜງການໃນໄລຍະໃໝ່, ສິ່ງທີ່ມີໃນປະຈຸບັນຍັງບໍ່ທັນຊັດເຈນ ແລະ ບໍ່ສອດຄ່ອງກັບກົດໝາຍວ່າດ້ວຍການຂົນສົ່ງທາງບົກ ປັບປຸງໃໝ່.

3.3 ການບັງຄັບໃຊ້ລະບຽບ, ກົດໝາຍກ່ຽວຂ້ອງ ເຂົ້າໃນການຄຸ້ມຄອງການຂົນສົ່ງຍັງປະຕິບັດບໍ່ທັນເຂັ້ມງວດເທົ່າທີ່ຄວນ ເນື່ອງຈາກມີການພົວພັນກັບຫຼາຍພາກສ່ວນ.

3.4 ບໍ່ມີການກວດກາເພື່ອບັງຄັບການປະຕິບັດລະບຽບການ ແລະ ກົດໝາຍ, ເຮັດໃຫ້ພາກທຸລະກິດ ມີການລະເມີດລະບຽບການ ຂົນສົ່ງໄດ້ງ່າຍຂື້ນເຊັ່ນ: ການບັນທຸກສິນຄ້າໃນລົດ, ການບັນທຸກຜູ້ໂດຍສານເກີນ, ການເສີມຕັ່ງນັ່ງ, ການແລ່ນລົດໄວເກີນກຳນົດ, ເຮັດໃຫ້ຜູ້ໂດຍສານບໍ່ໄດ້ຮັບຄວາມສະດວກ ແລະ ມີຄວາມສ່ຽງໃນການຂົນສົ່ງ.

3.5 ບຸກຄະລະກອນ ທີ່ມີຄວາມຮູ້, ຄວາມສາມາດດ້ານການຄຸ້ມຄອງ, ການບໍລິຫານທຸລະກິດການຂົນສົ່ງຍັງຈຳກັດຢູ່ ໂດຍສະເພາະຢູ່ຂັ້ນຈຸລະພາກ, ຈັນຍາບັນໃນການດຳເນີນທຸລະກິດ ຂອງ ຜູ້ປະກອບການບໍ່ສູງ .

4. ທິດທາງແກ້ໄຂໃນຕໍ່ໜ້າ.

4.1 ສືບຕໍ່ສ້າງແຜນຍຸດທະສາດການຂົນສົ່ງໃຫ້ໄດ້ຖືກຮັບຮອງຈາກລັດຖະບານ.

4.2 ປັບປຸງຂໍ້ກຳນົດ, ລະບຽບການ, ແຈ້ງການ ກ່ຽວກັບການຄຸ້ມຄອງການຂົນສົ່ງ ໃຫ້ສອດຄ່ອງກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຂົນສົ່ງທາງບົກສະບັບປັບປຸງ, ສອດຄ່ອງກັບສະພາບການແຕ່ລະໄລຍະ.

4.3 ເພີ່ມທະວີການຄຸ້ມຄອງມະຫາພາກດ້ວຍລະບຽບ, ກົດໝາຍ ເຂົ້າໃນວຽກງານຄຸ້ມຄອງການຂົນສົ່ງໂດຍສານ, ສິນຄ້າ ແລະ ສະຖານີລົດຂົນສົ່ງ.

ປີ 2015 ເປັນຕົ້ນໄປ ຈະຂຶ້ນທະບຽນ ຫົວໜ່ວຍວິສາຫະກິດການຂົນສົ່ງ ຕາມພາລະບົດບາດ ທີ່ກຳນົດໃນກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງດັ່ງນີ້:

- ກົມຂົນສົ່ງຈະຄຸ້ມຄອງ ການອອກອະນຸຍາດດຳເນີນທຸລະກິດຂົນສົ່ງໂດຍສານ, ສິນຄ້າ ແລະ ສະຖານີລົດຂົນສົ່ງໂດຍສານລະຫວ່າງແຂວງ, ລະຫວ່າງປະເທດ ປະຈຳປີ, ສົມທົບພະແນກ ຍທຂ ແຂວງ ລົງຕິດຕາມກວດກາ ການເຄື່ອນໄຫວຂອງວິສາຫະກິດ.
- ສຳລັບແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງ ແລະ ອອກອະນຸຍາດ ດຳເນີນທຸລະກິດຂົນສົ່ງໂດຍສານ, ສະຖານີລົດຂົນສົ່ງໂດຍສານ ພາຍໃນແຂວງ, ຕິດຕາມຄຸ້ມຄອງການເຄື່ອນໄຫວ ຂອງວິສາຫະກິດ ທີ່ດຳເນີນທຸລະກິດຂົນສົ່ງ ລະຫວ່າງແຂວງ, ລະຫວ່າງປະເທດ.

ທິດທາງແກ້ໄຂໃນຕໍ່ໜ້າ ຕໍ່.

4.4 ສ້າງຕັ້ງ ຄະນະກຳມະການຄຸ້ມຄອງສາຍທາງ ຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງເພື່ອຕິດຕາມກວດກາ, ຈັດສັນຄືນໃໝ່ຈຳນວນຖ້ຽວແລ່ນລົດ ຂອງແຕ່ລະສາຍທາງ ແລະ ເວລາປ່ອຍລົດ ຢູ່ສະຖານີ ຕົ້ນທາງ-ປາຍທາງ, ໂດຍໃຫ້ພະແນກ ຍທຂ ແຂວງ, ນະຄອນຫຼວງ ເປັນເຈົ້າການ.

4.5 ເພີ່ມທະວີການກວດກາການຂົນສົ່ງ ດ້ວຍການສ້າງຕັ້ງເຈົ້າໜ້າທີ່ ໂຍທາທິການ ແລະ ຂົນສົ່ງ ເພື່ອກວດກາການຂົນສົ່ງເປັນປະຈຳຕາມສາຍທາງ ແລະ ສືບຕໍ່ຈັດຕັ້ງກວດກາລົດກ່ອນປ່ອຍອອກຈາກສະຖານີຢ່າງເຂັ້ມງວດ ໂດຍການເຂົ້າຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ.

4.6 ນຳໃຊ້ລະບົບ IT ເຂົ້າໃນການຄຸ້ມຄອງການຂາຍປີ້ໂດຍສານ ໃຫ້ເປັນເອກະພາບທົ່ວປະເທດ ເພື່ອເຊື່ອມໂຍງລະຫວ່າງສະຖານີ ກັບ ຜູ້ບໍລິການຂາຍປີ້, ຈ່ອງປີ້ໂດຍສານໂດຍສະເພາະ ແມ່ນສະຖານີລົດຂົນສົ່ງລະຫວ່າງແຂວງ, ລະຫວ່າງປະເທດ.

4.7 ອອກດຳລັດນາຍົກ ກ່ຽວກັບການສ້າງຕັ້ງສະຖານີລົດຂົນສົ່ງໂດຍສານ ບົນພື້ນຖານກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງ, ການຄົ້ນຄວ້າສ້າງຕັ້ງສະຖານີລົດຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງ, ລະຫວ່າງປະເທດ ຕ້ອງຜ່ານຄຳເຫັນຂອງກະຊວງໂຍທາທິການແລະຂົນສົ່ງ.

4.8 ປະສານສົມທົບ ກະຊວງວັດທະນະທຳ ເພື່ອກຳນົດຄວາມຮັບຜິດຊອບ ລະຫວ່າງ ຂະແໜງ ຍທຂ ກັບ ຂະແໜງ ທ່ອງທ່ຽວໃນການຄຸ້ມຄອງການຂົນສົ່ງທ່ອງທ່ຽວໃຫ້ເປັນເອກະພາບນຳກັນ ເພື່ອເປັນພື້ນຖານໃຫ້ແກ່ການຈັດຕັ້ງປະຕິບັດຕົວຈິງ.

4.9 ຍົກລະດັບບຸກຄະລະກອນຄຸ້ມຄອງການຂົນສົ່ງ ທັງພາກລັດ ແລະ ພາກທຸລະກິດໃຫ້ມີຄວາມພ້ອມໃນການຄຸ້ມຄອງ ແລະ ການດຳເນີນການຂົນສົ່ງ, ຄຸ້ມຄອງ ແລະ ຍົກລະດັບນັກຂັບຂີ່ໃຫ້ມີຄຸນນະພາບ, ມີມາດຕາຖານ ແລະ ຄວາມສາມາດເພື່ອເຮັດໃຫ້ການຂົນສົ່ງເຊື່ອມໂຍງກັບພາກພື້ນ ແລະ ສາກົນໄດ້.

5. ມາດຕາການຈັດຕັ້ງປະຕິບັດ.

5.1 ກົມຂົນສົ່ງ:

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກ ສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ,ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງໃຫ້ພະແນກ ຍທຂ ແລະ ອົງການລັດທີ່ກ່ຽວ ຂ້ອງໃນຂອບເຂດທົ່ວປະເທດ.
- ຄົ້ນຄວ້າ ແລະ ປັບປຸງນິຕິກຳຕ່າງໆ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ຄຸ້ມຄອງໂດຍ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ, ປະສານກັບທຸກພາກສ່ວນເພື່ອແກ້ໄຂບັນຫາເກີດຂຶ້ນໃຫ້ທັນການ, ຊຸກຍູ້, ຕິດຕາມແລະກວດກາ ການຈັດຕັ້ງປະຕິບັດແຜນການໃຫ້ໄດ້ຮັບຜົນດີ.
- ຂຶ້ນທະບຽນ ສະຖານີລົດຂົນສົ່ງໂດຍສານ ແລະ ຫົວໜ່ວຍທຸລະກິດຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງ, ລະຫວ່າງປະເທດ ປະຈຳປີ.
- ຂຶ້ນທະບຽນ ຜູ້ຂັບລົດ, ພະນັກງານ ປະຈຳລົດຂົນສົ່ງໂດຍສານປະຈຳທາງ ລະຫວ່າງແຂວງ, ລະຫວ່າງປະເທດ.
- ຈັດຕັ້ງຝຶກອົບຮົມ ການຄຸ້ມຄອງການຂົນສົ່ງ ທັງພາກລັດ ແລະ ພາກທຸລະກິດ.
- ລົງສົມທົບ ພະແນກ ຍທຂ ແຂວງຈັດຕັ້ງກວດກາການເຄື່ອນໄຫວດຳເນີນການຂົນສົ່ງ.

5.2 ພະແນກ ຍທຂ ແຂວງ,ນະຄອນຫລວງ

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ, ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງ ໃຫ້ຫ້ອງການ ຍທຂ ເມືອງ ແລະ ຫົວໜ່ວຍທຸລະກິດທີ່ຕົນຮັບຜິດຊອບຄຸ້ມຄອງ.
- ຜັນຂະຫຍາຍທິດທາງແກ້ໄຂອັນລວມມາເປັນແຜນການຂອງຕົນເພື່ອຈັດຕັ້ງປະຕິບັດການຄຸ້ມຄອງລັດ ແລະ ວຽກງານຂົນສົ່ງ ຕາມລະບຽບກົດໝາຍໃຫ້ໄດ້ຮັບຜົນ.
- ປະສານສົມທົບອົງການທີ່ກ່ຽວຂ້ອງອື່ນໃນການຈັດຕັ້ງຄຸ້ມຄອງ ແລະ ກວດກາຫົວໜ່ວຍທຸລະກິດຂົນສົ່ງ ແລະ ສະຖານີຂົນສົ່ງ ຕາມພາລະບົດບາດ ແລະ ສິດໜ້າທີ່ຂອງຕົນ.

5.3 ຫ້ອງການ ຍທຂ ເມືອງ.

- ຈັດຕັ້ງເຜີຍແຜ່ກົດໝາຍວ່າດ້ວຍການຂົນສົ່ງທາງບົກສະບັບປັບປຸງໃໝ່ ສະບັບເລກທີ 24/ສພຊ,ລົງວັນທີ 12/2012 ແລະ ລະບຽບຄຸ້ມຄອງການຂົນສົ່ງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
- ປະຕິບັດສິດໜ້າທີ່ການຄຸ້ມຄອງການຂົນສົ່ງຕາມ ພາລະບົດບາດໃນຂອບເຂດຄວາມຮັບຜິດຊອບ ແລະຕາມການມອບໝາຍກຂອງພະແນກ ຍທຂ ແຂວງ, ນະຄອນຫລວງ.

ຂໍຂອບໃຈ